# ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ

# Economic Disputes Resolution in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 11
## ທັກສະການຄົ້ນຄວ້າສຳນວນຂໍ້ຂັດແຍ່ງໃນການໄກ່ເກ່ຍ
## Skills on Conflict resolution researching

### 1. ການຮັບສຳນວນຂໍ້ຂັດແຍ່ງ

ພາຍຫຼັງທີ່ໄດ້ຮັບຄຳຮ້ອງຂໍ, ຄຳແກ້ຄຳຮ້ອງຂໍ ພ້ອມດ້ວຍບັນດາເອກະສານ, ຂໍ້ມູນຫຼັກຖານຕ່າງໆທີ່ປະກອບໃນສຳນວນຄຳຮ້ອງຂໍ ແລະ ຄຳແກ້ຄຳຮ້ອງຂໍ ທີ່ຄູ່ກໍລະນີໄດ້ຍື່ນມາແລ້ວ ພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງໄດ້ກວດກາບັນດາເອກະສານ, ຂໍ້ມູນຫຼັກຖານດັ່ງກ່າວ ແລະ ສິ່ງສຳຄັນຕ້ອງໄດ້ກວດກາເບິ່ງຮູບການໃນການແກ້ໄຂຂໍ້ຂັດແຍ່ງ, ຈຳນວນຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກເກ່ຍ ວ່າມີຄວາມເປັນເອກະພາບກັນແລ້ວບໍ? ໃນກໍລະນີຖ້າຫາກເຫັນວ່າຍັງບໍ່ມີຄວາມເປັນເອກະພາບກັນພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງໄດ້ເຊີນໃຫ້ຄູ່ກໍລະນີທັງສອງຝ່າຍເຂົ້າມາປຶກສາຫາລືເພື່ອໃຫ້ມີຄວາມເປັນເອກະພາບກັນຮູບການໃນການແກ້ໄຂຂໍ້ຂັດແຍ່ງ, ຈຳນວນຜູ້ໄກ່ເກ່ຍ ຫຼື ຄະ ນະກຳມະການໄກເກ່ຍ. ພາຍຫຼັງທີ່ຄູ່ກໍລະນີທັງສອງຝ່າຍໄດ້ເປັນເອກະພາບກັນແລ້ວພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງໄດ້ແຈ້ງໃຫ້ຄູ່ກໍລະນີເຂົ້າມາຈ່າຍເງິນຄ່າທຳນຽມ ແລະ ຄ່າແຮງງານຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກເກ່ຍຕາມການຕົກລົງເຫັນດີຂອງຄູ່ກໍລະນີ ກັບຜູ້ໄກ່ເກ່ຍ ຫຼື ກຳມະການໄກ່ເກ່ຍ ຢູ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ຫຼັງຈາກນັ້ນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກໍຕ້ອງອອກຂໍ້ຕົກລົງຮັບເອົາຄຳຮ້ອງຂໍ ແລະ ຄຳແກ້ຄຳຮ້ອງຂໍ ຂຶ້ນເປັນສຳນວນຂໍ້ຂັດແຍ່ງ.

ພາຍຫຼັງທີ່ໄດ້ຂຶ້ນເປັນສຳນວນຂໍ້ຂັດແຍ່ງແລ້ວສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງໄດ້ອອກຂໍ້ຕົກລົງແຕ່ງຕັ້ງຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຕາມການສະເໜີຂອງຄູ່ກໍລະນີ ແລະ ຄົ້ນຄວ້າຂອງພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບລາຍຊື່ເປັນຕົ້ນໄປ. ຈາກນັ້ນ, ພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕ້ອງມອບສຳນວນຂໍ້ຂັດແຍ່ງໃຫ້ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ເພື່ອດຳເນີນການແກ້ໄຂຕາມລະບຽບກົດໝາຍ.

ໃນກໍລະນີທີ່ຄູ່ກໍລະນີທັງສອງຝ່າຍ ຫາກຍັງບໍ່ທັນເປັນເອກະພາບກັນກ່ຽວກັບຮູບການແກ້ໄຂຂໍ້ຂັດແຍ່ງ ຝ່າຍໜຶ່ງເລືອກເອົາຮູບການໄກ່ເກ່ຍ, ແຕ່ອີກຝ່າຍໜຶ່ງພັດເລືອກເອົາຮູບການຕັດສິນ. ສະນັ້ນພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງໄດ້ເຊີນໃຫ້ຄູ່ກໍລະນີທັງສອງຝ່າຍເຂົ້າມາປຶກສາຫາລືເພື່ອໃຫ້ມີຄວາມເປັນເອກະພາບກັນຕໍ່ກັບຮູບການໃນການແກ້ໄຂຂໍ້ຂັດແຍ່ງ ແລະ ຜ່ານການປຶກສາຫາລືຄູ່ກໍລະນີທັງສອງຝ່າຍຕ່າງ

ຝ່າຍຕ່າງກໍຍັງຢືນຢັນເອົາຮູບການທີ່ຕົນເລືອກນັ້ນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກໍບໍ່ສາມາດຮັບເອົາຮັບຄໍາຮ້ອງຂໍ, ຄໍາແກ້ຄໍາຮ້ອງຂໍ ພ້ອມດ້ວຍບັນດາເອກະສານ, ຂໍ້ມູນຫຼັກຖານຕ່າງໆທີ່ປະກອບໃນສໍານວນຄໍາຮ້ອງຂໍ ແລະ ຄໍາແກ້ຄໍາຮ້ອງຂໍ ທີ່ຄູ່ກໍລະນີໄດ້ຍື່ນນັ້ນມາພິຈາລະນາແກ້ໄຂໄດ້ ແລະ ຈະໄດ້ສົ່ງຄໍາຮ້ອງຂໍ, ຄໍາແກ້ຄໍາຮ້ອງຂໍ ພ້ອມດ້ວຍບັນດາເອກະສານ, ຂໍ້ມູນຫຼັກຖານຕ່າງໆທີ່ປະກອບມານັ້ນຄືນໃຫ້ແກ່ຄູ່ກໍລະນີທັງສອງຝ່າຍ.

**2. ການຄົ້ນຄວ້າສໍານວນຂໍ້ຂັດແຍ່ງ**

ໃນກໍລະນີທີ່ຄູ່ກໍລະນີທັງສອງຝ່າຍຫາກເລືອກຮູບການແກ້ໄຂດ້ວຍການໄກ່ເກ່ຍ ພາຍຫຼັງທີ່ໄດ້ຮັບສໍານວນຂໍ້ຂັດແຍ່ງຈາກພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ຕ້ອງເອົາຄໍາໃຫ້ການຂອງຄູ່ກໍລະນີ ເພື່ອກໍານົດແຜນການໄກ່ເກ່ຍ ພາຍໃນສິບຫ້າວັນ ນັບແຕ່ວັນທີ່ໄດ້ຮັບການແຕ່ງຕັ້ງເປັນຕົ້ນໄປ ແລ້ວແຈ້ງມາຍັງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ການໄກ່ເກ່ຍຕ້ອງດໍາເນີນໂດຍຊ້ອງໜ້າຄູ່ກໍລະນີ ຫຼື ຜູ້ຕາງໜ້າ. ຄູ່ກໍລະນີມີສິດສະເໜີບັນຫາ, ຂໍ້ມູນ ຫຼື ຫຼັກຖານຕ່າງໆກ່ຽວກັບຂໍ້ຂັດແຍ່ງ ແລະ ວິທີທາງອອກຕໍ່ຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການໄກ່ເກ່ຍ ໃນໄລຍະເວລາດໍາເນີນການໄກ່ເກ່ຍ.

ໃນກໍລະນີທີ່ຄູ່ກໍລະນີທັງສອງຝ່າຍຫາກເລືອກຮູບການແກ້ໄຂດ້ວຍການໄກເກ່ຍ ພາຍຫຼັງທີ່ໄດ້ຮັບສໍານວນຂໍ້ຂັດແຍ່ງຈາກພະແນກແກ້ໄຂຂໍ້ຂັດແຍ່ງ ຫຼື ໜ່ວຍງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການໄກ່ເກ່ຍ ຕ້ອງໃຫ້ຄູ່ກໍລະນີສະເໜີຂໍ້ມູນຫຼັກຖານພ້ອມທັງອະທິບາຍ, ຊີ້ແຈງຂໍ້ມູນ, ຫຼັກຖານຂອງຕົນ ພ້ອມດຽວກັນນັ້ນກໍຕ້ອງຮັບປະກັນໃຫ້ຄູ່ກໍລະນີມີການໂຕ້ແຍ່ງ, ຊັກຖາມຕໍ່ຫຼັກຖານຂອງຄູ່ກໍລະນີອີກຝ່າຍ ໜຶ່ງ.

ຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການໄກເກ່ຍ ອາດຈະລົງເກັບກໍາຂໍ້ມູນ, ຫຼັກຖານກັບທີ່ ຕາມການສະເໜີ ຫຼື ການເຫັນດີຂອງຄູ່ກໍລະນີ.

ໃນກໍລະນີຈໍາເປັນທີ່ຕ້ອງການພິສູດຂໍ້ມູນ, ຫຼັກຖານໃດໜຶ່ງ ຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການໄກ່ເກ່ຍ ມີສິດສະເໜີຕໍ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອສະເໜີແຕ່ງຕັ້ງຜູ້ຊ່ຽວຊານ ຫຼື ຜູ້ຊໍານານງານ ເພື່ອພິສູດຂໍ້ມູນ, ຫຼັກຖານນັ້ນ

ຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການໄກ່ເກ່ຍ ຕ້ອງຄົ້ນຄວ້າຄໍາຮ້ອງຂໍ, ຄໍາແກ້ຄໍາຮ້ອງຂໍ, ເອກະສານ, ຂໍ້ມູນ ຫຼັກຖານຢ່າງລະອຽດ, ຄົບຖ້ວນ, ຮອບດ້ານ, ພາວະວິໃສ ແລະ ຕ້ອງດໍາເນີນການໄກ່ເກ່ຍພາຍໃນສິບຫ້າວັນ ນັບແຕ່ວັນທີ່ໄດ້ຮັບການແຕ່ງຕັ້ງເປັນຕົ້ນໄປ ເວັ້ນເສຍແຕ່ກໍລະນີທີ່ມີຄວາມຫຍຸ້ງຍາກຍ້ອນການປະກອບຫຼັກຖານ ຫຼື ດ້ວຍເຫດຜົນອື່ນ ຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການໄກ່ເກ່ຍ ຕ້ອງແຈ້ງໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແຈ້ງເຫດຜົນດັ່ງກ່າວໃຫ້ຄູ່ກໍລະນີຮັບຮູ້.

**3. ການຊັ່ງຊາຕີລາຄາຫຼັກຖານ**

ຫຼັກຖານ ແມ່ນບັນດາຂໍ້ມູນຕົວຈິງທີ່ພົວພັນກັບຂໍ້ຂັດແຍ່ງ ຊຶ່ງຄູ່ກໍລະນີ, ບຸກຄົນທີ່ສາມນໍາມາສະເໜີຕໍ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດທາງດ້ານເສດຖະກິດ ຫຼື ຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ລົງເກັບກໍາຂໍ້ມູນ, ຫຼັກຖານກັບທີ່ຕາມການສະເໜີ ຫຼື ການເຫັນດີຂອງຄູ່ກໍລະນີ ຫຼື ແມ່ນບົດສະຫຼຸບ, ບົລາຍງານຂອງຜູ້ຊ່ຽວຊານ, ຜູ້ຊໍານານງານ ຊຶ່ງຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ນໍາມາຊັ່ງຊາຕີລາຄາ ເພື່ອເປັນບ່ອນອີງໃຫ້ແກ່ການດໍາເນີນການແກ້ໄຂຂໍ້ຂັດແຍ່ງ.

**3.1. ປະເພດຫຼັກຖານ**

ຫຼັກຖານໃນຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນມີລັກສະນະຄ້າຍຄືກັນກັບຫຼັກຖານໃນຄະດີການຄ້າ ປະກອບມີຄື[1]:

1). ຫຼັກຖານທາງດ້ານວັດຖຸ;

2). ຫຼັກຖານທາງດ້ານເອກະສານ;

3). ຫຼັກຖານທາງດ້ານບຸກຄົນ.

ຫຼັກຖານທາງດ້ານວັດຖຸ ແມ່ນ ວັດຖຸສິ່ງຂອງທີ່ພົວພັນກັບຂໍ້ຂັດແຍ່ງເຊັ່ນ: ພາຫະນະ, ຕຶກອາຄານ, ຮົ້ວ ແລະ ວັດຖຸສິ່ງຂອງອື່ນ.

ຫຼັກຖານທາງດ້ານເອກະສານ ແມ່ນ ບັນດາເອກະສານທີ່ພົວພັນກັບຂໍ້ຂັດແຍ່ງເຊັ່ນ: ສັນຍາ, ບັນຊີຊັບສິນ, ໃບຮຽກເກັບເງິນ, ຮູບພາບ ແລະ ເອກະສານອື່ນໆ.

ຫຼັກຖານທາງດ້ານບຸກຄົນ ແມ່ນ ຄຳໃຫ້ການຂອງຄູ່ກໍລະນີ, ຄຳໃຫ້ການ ແລະ ການຢັ້ງຢືນຂອງພະຍານ ແລະ ຜູ້ເຂົ້າຮ່ວມອື່ນທີ່ພົວພັນກັບຂໍ້ຂັດແຍ່ງ.

**3.2. ວິທີການຕີລາຄາຫຼັກຖານ**

**3.2.1. ການຕີລາຄາຫຼັກຖານຢ່າງຄົບຖ້ວນ**

ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຕ້ອງໄດ້ເກັບກຳຂໍ້ມູນຫຼັກຖານທັງໝົດທີ່ກ່ຽວຂ້ອງກັບເຫດການຂອງຂໍ້ຂັດແຍ່ງ.

**3.2.2. ການຕີລາຄາຫຼັກຖານຢ່າງຮອບດ້ານ**

ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຕ້ອງໄດ້ພິຈາລະນາທຸກຫຼັກຖານທີ່ຝ່າຍຮ້ອງຂໍໄດ້ຮ້ອງຂໍ, ຝ່າຍຖືກຮ້ອງຂໍໄດ້ແກ້ຄຳຮ້ອງຂໍ ຫຼື ຮ້ອງແຍ່ງ ລວມທັງຫຼັກຖານຂອງບຸກຄົນທີ່ສາມ.

**3.2.3. ການຕີລາຄາຫຼັກຖານຢ່າງພາວະວິໄສ**

ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຕ້ອງຢູ່ບົນພື້ນຖານຂໍ້ມູນຫຼັກຖານ, ກົດໝາຍ ແລະ ຄວາມຍຸຕິທຳ

**3.3. ການນຳໃຊ້ຫຼັກຖານ**

ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຕ້ອງກວດກາ, ຊັ່ງຊາຕີລາຄາຫຼັກຖານດ້ວຍຄວາມໝັ້ນໃຈຂອງຕົນເອງ ບົນພື້ນຖານການພິຈາລະນາເຫດການຂອງຂໍ້ຂັດແຍ່ງທັງໝົດຢ່າງ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ.

ຂໍ້ມູນຫຼັກຖານຈະມີຄຸນຄ່າໃຊ້ໄດ້ກໍຕໍ່ເມື່ອຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ໄດ້ກວດກາ, ຕີລາຄາ ແລະ ຮັບຮູ້ແລ້ວເທົ່ານັ້ນ ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຕ້ອງເອົາການຮັບຮູ້ຫຼັກຖານທີ່ເປັນເອກະພາບຂອງຄູ່ກໍລະນີເປັນຫຼັກໃນການພິຈາ ລະນາແກ້ໄຂຂໍ້ຂັດແຍ່ງ ແລະ ທຸກຂໍ້ມູນຫຼັກຖານທີ່ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ເຊື່ອຖືວ່າມີເຫດຜົນພຽງພໍຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ຕ້ອງນຳໃຊ້ເຂົ້າໃນການພິຈາລະນາແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ.

---

[1] ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ 2012,ມາດຕາ 98

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຍຸຕິທຳ
ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ
Economic Dispute Resolution Center

# ຄຳຮ້ອງຂໍ

**ຮຽນ:** ທ່ານ ຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຂ້າພະເຈົ້າ ທ້າວ/ນາງ: ......................................................................., ອາຍຸ ...... ປີ, ສັນຊາດ ................., ອາຊີບ ..........................., ຢູ່ບ້ານ .............................., ໜ່ວຍ ........., ເຮືອນເລກທີ ............, ຖະໜົນ .................., ເມືອງ ....................., ແຂວງ/ນະຄອນ ............................, ໂທລະສັບ ................................, ແຟັກ ....................., ອີເມວ..................................................................

ໃນນາມ.........................................................................................................................

..................................................................................................................................

..................................................................................................................................

..................................................................................................................................

ມີຈຸດປະສົງຮ້ອງຂໍມາຍັງທ່ານ ເພື່ອພິຈາລະນາແກ້ໄຂຂໍ້ຂັດແຍ່ງລະຫວ່າງຂ້າພະເຈົ້າກັບ:

ທ້າວ/ນາງ: ......................................................................................., ອາຍຸ ....... ປີ, ສັນຊາດ ................., ອາຊີບ ............................, ຢູ່ບ້ານ ............................., ໜ່ວຍ ........., ເຮືອນເລກທີ .............,ຖະໜົນ .................., ເມືອງ ......................, ແຂວງ/ນະຄອນ .................., ໂທລະສັບ .............................., ແຟັກ ............................, ອີເມວ ........................................................

**ກ່ຽວເລື່ອງ:** ........................................................................................................

## I. ເນື້ອໃນຂໍ້ຂັດແຍ່ງ (ເຫດການທີ່ເກີດຂຶ້ນ ແລະ ມູນຄ່າຂໍ້ຂັດແຍ່ງ)

..................................................................................................................................

..................................................................................................................................

..................................................................................................................................

..................................................................................................................................

..................................................................................................................................

..................................................................................................................................

## II. ການແກ້ໄຂຜ່ານມາ(ຖ້າມີ)

..................................................................................................................................

..................................................................................................................................

**III.ບັນຫາທີ່ຮ້ອງຂໍໃຫ້ ສກສ ພິຈາລະນາແກ້ໄຂ**

1...............................................

2. ..............................................

3. ..............................................

**IV. ການເລືອກຮູບການ ແລະ ກຳມະການແກ້ໄຂ (ໃຫ້ໝາຍ☑ ໃສ່ຫ້ອງທີ່ຕົນເລືອກ)**

1. ແກ້ໄຂດ້ວຍຮູບການໄກ່ເກ່ຍ ☐
   - ຜູ້ໄກ່ເກ່ຍຈຳນວນ 1 ທ່ານ ☐
   - ຜູ້ໄກ່ເກ່ຍຈຳນວນ 2 ທ່ານ ☐
   - ຜູ້ໄກ່ເກ່ຍຈຳນວນ 3 ທ່ານ ☐
2. ແກ້ໄຂດ້ວຍຮູບການຕັດສິນໂດຍກຳມະການ ☐
   - ກຳມະການຕັດສິນຈຳນວນ 1 ທ່ານ ☐
   - ກຳມະການຕັດສິນ ຈຳນວນ 3 ທ່ານ ☐

ດັ່ງນັ້ນ, ຈຶ່ງຮ້ອງຂໍມາຍັງທ່ານເພື່ອພິຈາລະນາຕາມກົດໝາຍດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ທີ່ ນະຄອນຫຼວງວຽງຈັນ, ວັນທີ .......................

**ຜູ້ຮ້ອງຂໍ,**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຍຸຕິທຳ
ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ
Economic Dispute Resolution Center

# ຄຳແກ້ຄຳຮ້ອງຂໍ

**ຮຽນ:**ທ່ານ ຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຂ້າພະເຈົ້າ ທ້າວ/ນາງ: ..............................................................., ອາຍຸ ...... ປີ, ສັນຊາດ ................, ອາຊີບ .........................., ຢູ່ບ້ານ ............................, ໜ່ວຍ ........., ເຮືອນເລກທີ ..........., ຖະໜົນ ................., ເມືອງ ...................., ແຂວງ/ນະຄອນ ............................, ໂທລະສັບ ..............................., ແຟັກ ...................., ອີເມວ..............

ໃນນາມ.......................................................................................................................

.......................................................................................................................

.......................................................................................................................

.......................................................................................................................

ມີຈຸດປະສົງຮ້ອງຂໍມາຍັງທ່ານ ເພື່ອພິຈາລະນາແກ້ໄຂຂໍ້ຂັດແຍ່ງລະຫວ່າງຂ້າພະເຈົ້າກັບ:

ທ້າວ/ນາງ: ..........................................................................., ອາຍຸ ....... ປີ, ສັນຊາດ ................, ອາຊີບ ..........................., ຢູ່ບ້ານ ............................, ໜ່ວຍ ........., ເຮືອນເລກທີ ............,ຖະໜົນ ................., ເມືອງ ....................., ແຂວງ/ນະຄອນ ................., ໂທລະສັບ ............................., ແຟັກ ..........................., ອີເມວ ......................................................

**ກ່ຽວເລື່ອງ:** ...........................................................................................

**I. ເນື້ອໃນຂໍ້ຂັດແຍ່ງ (ເຫດການທີ່ເກີດຂຶ້ນ ແລະ ມູນຄ່າຂໍ້ຂັດແຍ່ງ)**

.......................................................................................................................

.......................................................................................................................

.......................................................................................................................

.......................................................................................................................

.......................................................................................................................

.......................................................................................................................

**II. ການແກ້ໄຂຜ່ານມາ(ຖ້າມີ)**

........................................................................................................................................

.......................................................................................................................................

**III. ບັນຫາຮ້ອງຂໍແຍ່ງ (ຖ້າມີ)**

........................................................................................................................................

.......................................................................................................................................

........................................................................................................................................

**IV. ບັນຫາທີ່ຂໍໃຫ້ ສກສ ພິຈາລະນາແກ້ໄຂ:**

**V. ການເລືອກຮູບການ ແລະ ກຳມະການແກ້ໄຂ (ໃຫ້ໝາຍ☑ ໃສ່ຫ້ອງທີ່ຕົນເລືອກ)**

1. ແກ້ໄຂດ້ວຍຮູບການໄກ່ເກ່ຍ ☐
    - ຜູ້ໄກ່ເກ່ຍ ຈຳນວນ 1 ທ່ານ ☐
    - ຜູ້ໄກ່ເກ່ຍ ຈຳນວນ 2 ທ່ານ ☐
    - ຜູ້ໄກ່ເກ່ຍ ຈຳນວນ 3 ທ່ານ ☐
2. ແກ້ໄຂດ້ວຍຮູບການຕັດສິນໂດຍກຳມະການ ☐
    - ກຳມະການຕັດສິນ ຈຳນວນ 1 ທ່ານ ☐
    - ກຳມະການຕັດສິນ ຈຳນວນ 3 ທ່ານ ☐

ດັ່ງນັ້ນ, ຈຶ່ງແກ້ຄຳຮ້ອງຂໍມາຍັງທ່ານເພື່ອພິຈາລະນາຕາມກົດໝາຍດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ທີ່ ນະຄອນຫຼວງວຽງຈັນ, ວັນທີ ........................

**ຜູ້ແກ້ຄຳຮ້ອງຂໍ,**

**<u>ໝາຍເຫດ:</u>**

ເອກະສານທີ່ຄັດຕິດມາພ້ອມ

1. ............................
2. ............................
3. ............................

**References:**


1. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ, ສະບັບເລກທີ 51/ສພຊ, ລົງວັນທີ 22/6/2018.
2. ປະມວນເອກະສານຝຶກອົບຮົມທັກສະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ, ການຕັດສິນໂດຍກຳມະການ, ປີ 2020.
3. ປື້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ປີ 2017.